# ນິທານທົ່ງຫາມເຕົ່າ

ແຕ່ຄາວກ່ອນມີທົ່ງສອງຜົວເມັຽ ຫາກິນຢູ່ໃນໜອງແຫ່ງນຶ່ງ, ໃນໜອງນັ້ນຍັງມີເຕົ່າອີກ ໂຕນຶ່ງອາສັຍຢູ່ເໝືອນກັນ. ທົ່ງກັບເຕົ່າໄດ້ພໍ້ກັນເປັນປະຈຳຈົນມີຄວາມລື້ງເຄີຍຮັກແພງກັນເປັນເວລານານ.

ຕໍ່ມາປີນຶ່ງເກີດຟ້າແລ້ງຝົນບໍ່ຕົກ ພາໃຫ້ນ້ຳໃນໜອງນັ້ນບົກແຫ້ງ. ດັ່ງນັ້ນ ທົ່ງສອງຜົວເມັຽຈຶ່ງປຶກສາຫາລືກັນກັບເຕົ່າວ່າ :

ເຕົ່າເອີຍ ! ນ້ຳຢູ່ໃນໜອງນີ້ກໍນັບມື້ນັບບົກແຫ້ງແລ້ວ ຫາແນວຊິກິນກໍບໍ່ມີ ພວກເຮົາຈະພາກັນເຝົ້າໜອງອັນເປົ່າແປນນີ້ເຮັດຫຍັງ ? ຖ້າຂືນຢູ່ໄປຕໍ່ຄົງຈະຕາຍຍ້ອນອຶດຢາກແທ້ໆແຫຼະ.ພວກຂ້ອຍເຫັນວ່າ ຄວນຈະຍ້າຍໄປຫາກິນຢູ່ໜອງໃຫຍ່ໆ ທີ່ມີນ້ຳໃສສະອາດ ແລະ ມີອາຫານຢ່າງຫຼວງຫຼາຍຈະບໍ່ດີກວ່າບໍ ? ຫຼື ໂຕມີຄວາມຄິດແນວໃດ ?

ເຕົ່າຕອບວ່າ ກໍດີແລ້ວ, ແຕ່ຂ້ອຍບໍ່ຮູ້ວ່າໜອງທີ່ພວກເຈົ້າເວົ້ານັ້ນຢູ່ໃສ. ທົ່ງຕອບວ່າ ເຣື່ອງໜອງນີ້ຂ້ອຍໄດ້ໄປເຫັນມາແລ້ວ, ຢູ່ບ່ອນນັ້ນ ເຖິງວ່າຝົນຈະບໍ່ຕົກດົນປານໃດ ນ້ຳໃນໜອງນັ້ນກໍບໍ່ແຫ້ງງ່າຍດອກ, ອາຫານການກິນເຊັ່ນ ປູ, ປາ, ກຸ້ງ, ຫອຍ ໆລໆ ມີຫຼາຍ, ຕິແຕ່ວ່າໜອງນັ້ນຢູ່ໄກແດ່ຈັກໜ້ອຍ.

ເຕົ່າເວົ້າຂື້ນອີກວ່າ : ເພື່ອນທັງສອງມີປີກມີຫາງຈະໄປຢູ່ໃສໃກ້ຫຼືໄກກໍບໍ່ຍາກ ບິນໄປບຶດດຽວກໍຮອດ. ແຕ່ສ່ວນຂ້ອຍນີ້ຕີ໋ຈະໄປນຳໝູ່ໄດ້ແນວໃດຕີນກໍສັ້ນໆ ຍ່າງພໍງຸບໆ ງັບໆ ປານໃດຈຶ່ງຮອດ, ຢ້ານແຕ່ໄປຕາຍຕາມທາງກ່ອນນັ້ນແຫຼະ .

ທົ່ງມີຄວາມເຫັນຊ່ວຍວ່າ : ຖ້າເຈົ້າຢາກໄປ ພວກຂ້ອຍຈະຫາວິທີເອົາເຈົ້າໄປນຳຈົນໄດ້, ຂໍແຕ່ເຈົ້າຕ້ອງເຮັດຕາມຄຳແນະນຳຂອງພວກຂ້ອຍ.

-ພວກເຈົ້າຈະຊ່ວຍຂ້ອຍແນວໃດ ? ເຕົ່າຖາມ.

-ພວກຂ້ອຍຈະເອົາປາກຄາບໄມ້ຜູ່ລະເບື້ອງ ໃຫ້ເຈົ້າຄາບເຄິ່ງກາງແລ້ວພວກຂ້ອຍຈະຫາມເຈົ້າບິນໄປ, ແຕ່ສິ່ງສຳຄັນທີ່ສຸດເວລາພວກຂ້ອຍຫາມເຈົ້າໄປ ເຈົ້າບໍ່ຕ້ອງເວົ້າຈານຳໃຜ, ບໍ່ອ້າປາກເປັນເດັດຂາດ ເຖິງຈະມີໃຜເອີ້ນຖາມແນວໃດກໍຢ່າເນີ້. ຖ້າເຈົ້າປະຕິບັດໄດ້ຕາມທີ່ພວກຂ້ອຍແນະນຳມານີ້ ພວກເຮົາທັງສາມກໍຈະໄປເຖິງໜອງນ້ຳອັນອຸດົມສົມບູນແຫ່ງນັ້ນແນ່ນອນ. ທົ່ງແນະນຳເຕົ່າ.

ເຕົ່າເວົ້າວ່າ : ຄັນຊັ້ນຂ້ອຍກໍດີໃຈແທ້ໆ ຂ້ອຍຈະເຮັດຕາມຄຳແນະນຳຂອງພວກເຈົ້າທຸກຢ່າງ, ຂໍແຕ່ພວກເຈົ້າຊ່ວຍເອົາຂ້ອຍອອກຈາກໜອງແຫ້ງແລ້ງ ແລະ ອຶດຢາກແຫ່ງນີ້.

ເມື່ອຕົກລົງກັນແລ້ວ, ທົ່ງທັງສອງກໍຄາບໄມ້ຜູ່ລະສົ້ນ ແລະ ໃຫ້ເຕົ່າຄາບເຄິ່ງກາງແລ້ວກໍຫາມເຕົ່າບິນໄປ. ພໍໄປຮອດເທິງໝູ່ບ້ານແຫ່ງນຶ່ງ, ຊາວບ້ານຫຼຽວເຫັນ ກໍພາກັນຫ້ອງຂື້ນແຊວໆວ່າ : ທົ່ງຫາມເຕົ່າ ! ທົ່ງຫາມເຕົ່າ ! ມາເບິ່ງແມ້ ! ເມື່ອເຕົ່າໄດ້ຍິນແນວນັ້ນ ກໍຄຶດຢາກອວດສະຫາວ ແລະ ຢາກປະກາດໃຫ້ຄົນທັງຫຼາຍຮູ້ວ່າ ມັນບໍ່ແມ່ນທົ່ງຫາມເຕົ່າ, ຂ້ອຍນີ້ເປັນເຕົ່າວິເສດຕ່າງຫາກທີ່ຫາມທົ່ງສອງໂຕໄປໄດ້. ບັງເອີນເຕົ່າລືມຄຳແນະນຳຂອງທົ່ງມັນກໍອ້າປາກຈະເວົ້າຄວາມຄິດອວດສະຫາວຂອງມັນອອກມາ, ແຕ່ທັນໃດນັ້ນປາກຂອງເຕົ່າກໍຫຼຸດຈາກໄມ້ຄານຫາມ ພາ ໃຫ້ເຕົ່າຕົກລົງດິນແຫ້ງກາງບ້ານຈົນຕາຍກັບທີ່.